# ການປະເມີນຜົນໂດຍອີງໃສ່ການປຶກສາຫາລື ເພື່ອສົ່ງເສີມການປົກປ້ອງສັງຄົມໃນພາກພື້ນອາຊີ ແລະ ປາຊີຟິກ (ABND)

## ວິທີການແບບມີສ່ວນຮ່ວມ

### ຂັ້ນຕອນທີ່ສົ່ງເສີມໃຫ້ຫລາຍຝ່າຍມີສ່ວນຮ່ວມ

ການປະເມີນຜົນໂດຍອີງໃສ່ການປຶກສາຫາລື ເພື່ອສົ່ງເສີມການປົກປ້ອງສັງຄົມ (ABND) ມີຈຸດປະສົງກຳນົດຂົງເຂດບຸລິມມະສິດທີ່ລັດຖະບານຈະມີສ່ວນຮ່ວມໃນການປົກປ້ອງສັງຄົມ, ທັງເປັນການປະເມີນຄ່າໃຊ້ຈ່າຍຕ່າງໆ ທີ່ຈະເກີດຂຶ້ນໃນການມີສ່ວນຮ່ວມຂອງລັດຖະບານ. ການປະເມີນຜົນດັ່ງກ່າວນີ້ອາໃສການຮ່ວມມືກັນຈາກຫລາຍພາກສ່ວນດັ່ງນີ້:

- ໜ່ວຍງານຂອງອົງການສະຫະປະຊາຊາດທີ່ເຮັດວຽກກ່ຽວກັບຖານການປົກປ້ອງສັງຄົມ(ILO, UNICEF, WHO, UNFPA, UNAIDS, UNESSCO, UNWOMEN, WFP) ແລະ ຄູ່ຮ່ວມງານເພື່ອການພັດທະນາອື່ນໆ.
- ກະຊວງກ່ຽວຂ້ອງ(ແຮງງານ, ສາທາ, ສະຫວັດດີການ, ການເງິນ, ແຜນການ, ການພັດທະນາຊົນນະບົດ, ແລະ ອື່ນໆ).
- ສູນສະຖິຕິແຫ່ງຊາດ ແລະ ໜ່ວຍງານຄົ້ນຄ້ວາວິຊາການກ່ຽວຂ້ອງ.
- ຕາງໜ້າຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ, ແລະ ອົງການຈັດຕັ້ງສັງຄົມພົນລະເຮືອນຕ່າງໆ.
- ອຳນາດການປົກຄອງທ້ອງຖິ່ນ(ໃນບາງກໍລະນີ).

ພາກສ່ວນທີ່ກ່າວມາຂ້າງເທິງນັ້ນຈະສະໜອງຂໍ້ມູນກ່ຽວກັບແຜນງານ ແລະ ໂຄງການທີ່ກຳລັງດຳເນີນຢູ່ (ລວມມີເນື້ອໃນ ແລະ ງົບປະມານ). ພາກສ່ວນເຫລົ່ານີ້ຍັງຊ່ວຍຊີ້ໃຫ້ເຫັນເຖິງຊ່ອງຫວ່າງ ແລະ ບັນຫາໃນການຈັດຕັ້ງປະຕິບັດນະໂຍບາຍ, ທັງໃຫ້ຄຳແນະນຳກ່ຽວກັບວິທີການຈັດຕັ້ງປະຕິບັດທີ່ສາມາດຮັບປະກັນຜົນສຳເລັດຕາມລະດັບຄາດໝາຍ ແລະ ເປັນໄປຕາມຍຸດທະສາດຂອງລັດຖະບານທີ່ວາງໄວ້ໂດຍຜ່ານການສະໜັບສະໜູນ ແລະ ການຜັນຂະຫຍາຍເປັນແຜນຈັດຕັ້ງປະຕິບັດທີ່ເປັນຮູບປະທຳ.

#### ການປຶກສາຫາລືທີ່ມີປະສິດທິຜົນ

ຄວາມຈິງແລ້ວຜູ້ມີສ່ວນຮ່ວມທັງຫລາຍດຳເນີນວຽກງານຕາມພາລະກິດຂອງເຂົາເຈົ້າ ແລະ ພົວພັນກັບວຽກງານປົກປ້ອງສັງຄົມພຽງສ່ວນໃດສ່ວນໜຶ່ງເທົ່ານັ້ນ. ສະນັ້ນ, ການປະເມີນຜົນແບບ ABND ເປັນວິທີການໜຶ່ງທີ່ມີປະສິດທິຜົນນຳມາເຊິ່ງການກະຕຸກຊຸກຍູ້ໃຫ້ຫລາຍໆພາກສ່ວນຮ່ວມມືກັນສຶກສາສະພາບປະກັນສັງຄົມເພື່ອກ້າວໄປສູ່ການອອກນະໂຍບາຍທີ່ເປັນບຸລິມະສິດ ແລະ ສອດຄ່ອງກັບສະພາບ ພ້ອມທັງກຳນົດວິໄສທັດໃນການພັດທະນາວຽກງານປົກປ້ອງສັງຄົມ. ເພື່ອຈະບັນລຸເປົ້າໝາຍ, ຜູ້ມີສ່ວນຮ່ວມຕ້ອງມີການປຶກສາຫາລື, ຄົ້ນຄວ້າ ແລະ ທົບທວນຄືນກ່ຽວກັບນະໂຍບາຍທີ່ຖືກນຳສະເໜີຜ່ານມາ ເພື່ອຈະໄດ້ມາເຊິ່ງການພິຈະລະນາທາງດ້ານງົບປະມານ ແລະ ຄ່າໃຊ້ຈ່າຍຕ່າງໆ.

#### ການຮ່ວມມືຂອງອົງການສະຫະປະຊາຊາດ

ໃນປະເທດໄທ ແລະ ອິນໂດເນເຊຍ, ການປະເມີນຜົນເພື່ອສົ່ງເສີມການປົກປ້ອງສັງຄົມຖືກດຳເນີນການໂດຍທີມງານ ຫລື ຄະນະຮັບຜິດຊອບຖານການປົກປ້ອງສັງຄົມຂອງອົງການສະຫະປະຊາຊາດ (UN SPF Team) ພາຍໃຕ້ການນຳພາຂອງຫ້ອງການອົງການແຮງງານສາກົນ (ILO). ໃນປະເທດຫວຽດນາມ, ILO ເປັນຜູ້ປະເມີນໂດຍຮ່ວມມືຢ່າງໃກ້ຊິດກັບໜ່ວຍງານອື່ນໆ ຂອງອົງການສະຫະປະຊາຊາດ.

#### ສາມຂັ້ນຕອນທີ່ສົ່ງເສີມການປະເມີນຜົນແບບ ABND

**ຂັ້ນຕອນ ທີ 1 – ການວາງແຜນວາດການປະເມີນ**

ຖານການປົກປ້ອງສັງຄົມ(SPF)ມີສີ່ຢ່າງທີ່ເປັນບັນທັດຖານບົ່ງຊີ້ສະພາບການປະກັນສັງຄົມ, ການປົກປ້ອງສັງຄົມ ແລະ ແຜນງານລຶບລ້າງຄວາມທຸກຍາກ, ທັງຊີ້ໃຫ້ເຫັນເຖິງຊ່ອງຫວ່າງ ແລະ ບັນຫາໃນການຈັດຕັ້ງປະຕິບັດນະໂຍບາຍ, ທັງໃຫ້ຄຳແນະນຳກ່ຽວກັບການວາງແຜນ ແລະ ວິທີການຈັດຕັ້ງປະຕິບັດຂໍ້ກຳນົດຕ່າງໆ ກ່ຽວກັບການປົກປ້ອງສັງຄົມ ເພື່ອຮັບປະກັນໃຫ້ຖານການປົກປ້ອງສັງຄົມຂັ້ນພື້ນຖານມີຜົນປະໂຫຍດແກ່ປະຊາຊົນ.

*ແຜນວາດ 1: ແຜນວາດການປະເມີນຜົນ*

| | ເປົ້າໝາຍຂອງ SPF | ຂໍ້ກຳນົດກ່ຽວກັບການປົກປ້ອງສັງຄົມທີ່ມີຢູ່ໃນປະຈຸບັນ | ຂໍ້ກຳນົດ(ຫລື ຍຸດທະສາດ) ທີ່ໄດ້ວາງແຜນການເອົາໄວ້ກ່ຽວກັບການປົກປ້ອງສັງຄົມ | ຊ່ອງຫວ່າງ | | ຄຳແນະນຳ |
|---|---|---|---|---|---|---|
| | | | | ຊ່ອງຫວ່າງໃນການວາງແຜນ | ບັນຫາໃນການຈັດຕັ້ງປະຕິບັດ | |
| ສຸຂະພາບ | | | | | | |
| ເດັກນ້ອຍ | | | | | | |
| ອາຍຸໃນເກນອອກແຮງງານ | | | | | | |
| ຜູ້ສູງອາຍຸ | | | | | | |

ສະພາບການປ ກ

ບັນທັດຖານຂອງຖານການປົກປ້ອງສັງຄົມເພື່ອບົ່ງຊີ້ເຖິງສິ່ງຍັ້ງຢືນ ແລະ ເປົ້າໝາຍ

ຊ່ອງຫວ່າງໃນການວາງແຜນ ແລະ ບັນຫາໃນການຈັດຕັ້ງປະຕິບັດ (ເພື່ອນຳໄປສູ່ການສ້າງຖານການປົກປ້ອງສັງຄົມ)

ນຳໄປສູ່ການປຶກສາຫາລືເພື່ອກຳນົດນະໂຍບາຍ

ການປະເມີນຜົນຕ້ອງຜ່ານການມີສ່ວນຮ່ວມຂອງຫລາຍຝ່າຍທີ່ກ່ຽວຂ້ອງ ພາຍໃຕ້ການປຶກສາຫາລືໂດຍກົງ ແລະ ມີການປະຊຸມຄົ້ນຄວ້າກັນບໍ່ວ່າຈະຢູ່ຂັ້ນສູນກາງ ຫລື ທ້ອງຖິ່ນກໍ່ຕາມ.





*ກອງປະຊຸມຄົ້ນຄວ້າ ທີ່ບາງກອກ ແລະ ຈາກາຕາ*

# ການປະເມີນຜົນໂດຍອີງໃສ່ການປຶກສາຫາລື ເພື່ອສົ່ງເສີມການປົກປ້ອງສັງຄົມໃນພາກພື້ນອາຊີ ແລະ ປາຊີຟິກ (ABND)

**ຂັ້ນຕອນ ທີ 2 - ແບບແຜນການປະເມີນຜົນທີ່ໃຊ້ໄດ້ຢ່າງວ່ອງໄວ(RAP)**

ຂັ້ນຕອນທີ່ສອງນີ້ຄືການນຳເອົາແບບແຜນການປະເມີນຜົນທີ່ໃຊ້ໄດ້ຢ່າງວ່ອງໄວ(RAP) ເຊິ່ງອົງການ ILO ໄດ້ພັດທະນາຂຶ້ນເພື່ອທຳການຄາດຄະເນ ແລະ ຕີລາຄາຄ່າໃຊ້ຈ່າຍສຳລັບແຜນການປົກປ້ອງສັງຄົມໃນໄລຍະ 10 ປີຂ້າງໜ້າ. ຜົນຂອງການຄາດຄະເນຄ່າໃຊ້ຈ່າຍຈະເປັນຖານຂໍ້ມູນເພື່ອນຳໄປຄົ້ນຄວ້າຫາແຫລ່ງທຶນປະຈຳສົກປີ ຫລື ສະເໜີຂໍງົບປະມານແບ່ງປັນຈາກລັດຖະບານ, ທັງເປັນຂໍ້ມູນໃນການວາງນະໂຍບາຍອື່ນໆ ທີ່ເປັນບຸລິມະສິດໃນວຽກງານການປົກປ້ອງສັງຄົມ.

*ແຜນວາດ 2: ໂຄງສ້າງແບບແຜນການປະເມີນຜົນທີ່ໃຊ້ໄດ້ຢ່າງວ່ອງໄວ(RAP)*




*ແຜນວາດ 3: ຕົວຢ່າງຂອງການຄາດຄະເນທີ່ເປັນການແນະນຳເພື່ອເກີດຜົນໃນລະດັບສູງ ແລະ ຕ່ຳ ໃນ ປະເທດໄທ*




ແບບແຜນການປະເມີນຜົນທີ່ໃຊ້ໄດ້ຢ່າງວ່ອງໄວ (RAP) ຖືເປັນຕົວຊີ້ວັດຜົນເຊິ່ງສາມາດນຳເອົາໄປຝຶກອົບຮົມກ່ຽວກັບການຄິດໄລ່ງົບປະມານໃນການວາງນະໂຍບາຍການປົກປ້ອງສັງຄົມ.

**ຂັ້ນຕອນ ທີ 3 - ຂັ້ນຕອນສຸດທ້າຍ** ຂັ້ນຕອນສຸດທ້າຍຄືການລາຍງານຜົນຂອງການປະເມີນຕໍ່ລັດຖະບານເພື່ອສະເໜີຮັບຮອງ ແລະ ກຳນົດແຜນການສະເພາະໜ້າ. ຕົວຢ່າງ: ຢູ່ຫວຽດນາມ, ຜົນຂອງການປະເມີນເປັນບ່ອນອີງໃນການວາງແຜນໂຄງການກໍ່ສ້າງໂຍທາທິການແບບທົດລອງ ແລະ ສ້າງເງື່ອນໄຂໃໝ່ເພື່ອຂະຫຍາຍຕາໜ່າງການປົກປ້ອງສັງຄົມໃຫ້ກວມໄປເຖິງຜູ້ສູງອາຍຸ.

### ການນຳໃຊ້ ABND ເພື່ອອອກແບບ ແລະ ວາງແຜນຖານການປົກປ້ອງສັງຄົມແຫ່ງຊາດ

ກອງປະຊຸມຄັ້ງທີ 15 ປະຈຳພາກພື້ນອາຊີ ແລະ ປາຊີຟິກ ໃນເດືອນທັນວາ ປີ 2011 , ລັດສະມາຊິກຂອງອົງການແຮງງານສາກົນໄດ້ຮັບຮອງຢ່າງເປັນເອກະສັນກັນເພື່ອສົ່ງເສີມຖານການປົກປ້ອງສັງຄົມໃຫ້ມີປະສິດທິພາບ ແລະ ສອດຄ່ອງກັບສະພາບການຂອງແຕ່ລະປະເທດ. ABND ມີຈຸດປະສົງເພື່ອສະໜັບສະໜູນຫລາຍຂົງເຂດວຽກງານຄືດັ່ງນີ້:

- ພັດທະນາແຜນການເພື່ອກຳນົດຖານການປົກປ້ອງສັງຄົມແຫ່ງຊາດ.
- ນຳໃຊ້ແບບແຜນການປະເມີນຜົນທີ່ໃຊ້ໄດ້ຢ່າງວ່ອງໄວເຂົ້າໃນການປະເມີນສະພາບການໃນປະເທດເພື່ອນຳເອົາຂໍ້ມູນໄປວິເຄາະ ແລະ ຄິດໄລ່ງົບປະມານ.
- ສົ່ງເສີມບັນດາກະຊວງກ່ຽວຂ້ອງ, ຕາງໜ້າຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ, ອົງການຈັດຕັ້ງເພື່ອສັງຄົມ (CSOs) ແລະ ອົງການເຄືອຂ່າຍ ສປຊ (UNCTS) ໃຫ້ເຂົ້າໃຈກ່ຽວກັບບົດບາດຂອງຖານການປົກປ້ອງສັງຄົມ ແລະ ຄວາມສຳຄັນໃນການຮ່ວມແຮງຮ່ວມໃຈກັນພັດທະນາວຽກງານປົກປ້ອງສັງຄົມ.
- ຍົກລະດັບຄວາມອາດສາມາດຂອງນັກວິເຄາະໃນວຽກງານປົກປ້ອງສັງຄົມໂດຍສະເພາະແມ່ນການນຳໃຊ້ວິທີຄິດໄລ່ງົບປະມານ ແລະ ວິເຄາະທາງດ້ານການເງິນ.
- ແຕ່ງຕັ້ງທີມງານ ຫລື ຄະນະຮັບຜິດຊອບຖານການປົກປ້ອງສັງຄົມ ທີ່ຂຶ້ນກັບອົງການສະຫະປະຊາຊາດ, ແລະ ສົ່ງເສີມໜ່ວຍງານຕ່າງໆ ຂອງ ອົງການສະຫະປະຊາຊາດໃຫ້ການຮ່ວມມືໃນວຽກງານປົກປ້ອງສັງຄົມ.

### ການແລກປ່ຽນປະສົບການ - ການມີສ່ວນຮ່ວມ!

ການມີສ່ວນຮ່ວມເພື່ອແລກປ່ຽນປະສົບການກັບອົງການແຮງງານສາກົນກ່ຽວກັບການປະກັນສັງຄົມ, ການປະເມີນຜົນຂອງລັດຖະບານກ່ຽວກັບການປະກັນສັງຄົມ ແລະ ຕຳແໜ່ງງານຫວ່າງ ທີ່ເປັນການສົ່ງເສີມການປະເມີນຜົນໃນປະເທດອິນໂດເນເຊຍ ແລະ ໄທ ສາມາດເຂົ້າໄປທີ່ເວັບໄຊດັ່ງລຸ່ມນີ້!

www.social-protection.org ☜

### ການປະກອບສ່ວນຂອງຫ້ອງການອົງການແຮງງານກັບຕໍ່ ABND ໃນທະວີບອາຊີໄດ້ຮັບການສະໜັບສະໜູນຈາກໂຄງການດັ່ງລຸ່ມນີ້:

- ແຜນງານຮ່ວມມືລະຫວ່າງຫ້ອງການອົງການແຮງງານສາກົນ ແລະ ລັດຖະບານສາທາລະນະລັດເກົາຫລີ;
- ໂຄງການຮ່ວມມືລະຫວ່າງອົງການແຮງງານສາກົນ ແລະ ສະຫະພາບເອີຣົບເພື່ອປັບປຸງວຽກງານປົກປ້ອງສັງຄົມ ແລະ ສົ່ງເສີມການມີວຽກເຮັດງານທຳໃນປະເທດກຳປູເຈຍ;
- ໂຄງການຮ່ວມມືລະຫວ່າງຫ້ອງການອົງການແຮງງານສາກົນ ແລະ ປະເທດແຟງລັງ.


**ຕ້ອງການຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່ຜູ້ຊ່ຽວຊານລຸ່ມນີ້:**

ທ່ານ Valerie Schmitt, ຜູ້ຊ່ຽວຊານດ້ານການປະກັນສັງຄົມ, ທີ່ຫ້ອງການອົງການແຮງງານສາກົນເພື່ອການເຮັດວຽກທີ່ມີຄຸນຄ່າ ລະ ເປັນທຳ ປະຈຳບາງກອກ

ທ່ານ Markus Ruck, ຜູ້ຊ່ຽວຊານອາວຸໂສດ້ານການປະກັນສັງຄົມ, ທີ່ຫ້ອງການອົງການແຮງງານສາກົນເພື່ອການເຮັດວຽກທີ່ມີຄຸນຄ່າ ລະ ເປັນທຳ ປະຈຳ ເດັນລີ

ທ່ານ Carlos Galian, ຜູ້ຊ່ຽວຊານດ້ານການປະກັນສັງຄົມ, ທີ່ຫ້ອງການຜູ້ປະສານງານອົງການແຮງງານສາກົນປະຈຳຫວຽດນາມ

ທ່ານ Sinta Satriana, ທີ່ປຶກສາດ້ານການປະກັນສັງຄົມ, ທີ່ຫ້ອງການຜູ້ປະສານງານອົງການແຮງງານສາກົນປະຈຳອິນໂດເນເຊຍ

ທ່ານ Alice Molinier, ທີ່ປຶກສາດ້ານການປະກັນສັງຄົມ, ທີ່ຫ້ອງການຜູ້ປະສານງານອົງການແຮງງານສາກົນປະຈຳປະເທດໄທ

ໂທລ: +66 22 88 1234

Email: Bangkok@ilo.org

www.ilo.org/asia